ອັກຊີນໂຄວິດ-19

# ໄດ້ຮັບຂໍ້ເທັດຈິງ.

## ວັກຊີນແມ່ນຟຣີສໍາລັບທຸກຄົນ.

ແຕ່ຕ້ອງແນ່ໃຈ ແລະ ສອບຖາມວ່າມີຄ່າໃຊ້ຈ່າຍອື່ນໃນການສັກຢາວັກຊີນຫຼືບໍ່.

- ບໍ່ມີໃຜຖືກປະຕິເສດການໃນຮັບຢາວັກຊີນ ເຖິງວ່າພວກເຂົາບໍ່ມີຄວາມສາມາດຈ່າຍຄ່າທໍານຽມບໍລິຫານກໍ່ ຕາມ.
- ເມື່ອຢາວັກຊີນໃຊ້ໄດ້ຢ່າງກວ້າງຂວາງ, ທຸກຄົນສາມາດສັກຢາວັກຊີນໂດຍບໍ່ສົນສະຖານະການເຂົ້າເມືອງ.
- ທຸກຄົນສາມາດໄດ້ສັກຢາວັກຊີນເມື່ອເປັນຜຽນຂອງພວກເຂົາ.

## ວັກຊີນປ້ອງກັນທ່ານຈາກການເກີດເຊື້ອໂຄວິດ-19.

- ຖ້າທ່ານຍັງເປັນໂຄວິດ-19 ຫຼັງຈາກທີ່ໄດ້ຮັບຢາວັກຊີນແລ້ວ, ວັກຊີນປົກປ້ອງທ່ານຈາກການເປັນໄຂ້ຮຸນແຮງ.
- ເຖິງວ່າຖ້າທ່ານເປັນໂຄວິດ-19, ທ່ານຄວນຈະຍັງຕ້ອງໄດ້ຮັບຢາວັກຊີນ.
- ມັນຍັງບໍ່ທັນຮູ້ໄດ້ວ່າ ຄົນຜູ້ໜຶ່ງຈະໄດ້ຮັບການປົກປ້ອງດົນປານໃດຈາກການເປັນໂຄ ວິດ-19 ອີກຄັ້ງໜຶ່ງ.



## ວັກຊີນໂຄວິດ-19 ມີຄວາມປອດໄພ ແລະ ມີປະສິດທິພາບ. ວັກຊີນບໍ່ສາມາດເຮັດໃຫ້ທ່ານເປັນໂຄວິດ-19.

- ການຮັບສັກຢາ ວັກຊີນ ແມ່ນປອດໄພກວ່າການເປັນໂຄວິດ-19.
- ຫຼາຍລ້ານຄົນໄດ້ຮັບຄວາມປອດໄພຈາກການສັກຢາວັກຊີນ.
- ບໍ່ມີວັກຊີນຊະນິດໃດໄດ້ຖືກທົດສອບຫຼາຍສໍາລັບຄວາມປອດໄພ ຂອງມັນໃນປະຫວັດສາດສະຫະລັດອາເມລິກາ.
- ຢາວັກຊີນໄດ້ຖືກພິສູດວ່າປອດໄພໄດ້ຫຼາຍເທົ່ານີ້ ສໍາລັບຫຼາຍພັນຄົນ, ລວມທັງ ກຸ່ມຄົນທີ່ມີຫຼາກຫຼາຍເຊື້ອຊາດ, ຊົນເຜົ່າ ແລະ ອາຍຸ.
- ວັກຊີນໂຄວິດ-19 ບໍ່ປ່ຽນແປງ ດີເອັນເອ (DNA) ຂອງທ່ານ.

NRC-RIM
National Resource Center for Refugees, Immigrants, and Migrants

ສໍາລັບຂໍ້ມູນເພີ່ມເຕີມ: cdc.gov/coronavirus

# ຜົນຂ້າງຄຽງແມ່ນເລື່ອງປົກກະຕິ.

**ຜົນຂ້າງຄຽງບໍ່ໝາຍເຖິງວ່າທ່ານເປັນໂຄວິດ-19.**

- ຜົນຂ້າງຄຽງ ໝາຍເຖິງວັກຊີນກຳລັງສອນຮ່າງກາຍຂອງທ່ານໃຫ້ຕໍ່ສູ້ກັບໂຄວິດ-19.
- ຜົນຂ້າງຄຽງອາດຈະປະກອບດ້ວຍ:
  - ການເຈັບປວດ ຫຼື ການບວມຢູ່ແຂນຂອງທ່ານບໍລິເວນທີ່ທ່ານສັກຢາວັກຊີນ.
  - ເຈັບຫົວ, ໜາວສັ່ນ, ຫຼື ເປັນໄຂ້.
- ຖ້າທ່ານຮູ້ສຶກບໍ່ສະບາຍ, ທ່ານອາດຈະຕ້ອງການໃຊ້ເວລາພັກສອງສາມມື້ຈາກການເຮັດ ວຽກຈົນກວ່າທ່ານຈະຮູ້ສຶກດີຂຶ້ນ.
- ທ່ານຕ້ອງພັກປະມານ 15–30 ນາທີ ຫຼັງຈາກທີ່ສັກຢາວັກຊີນ ເພື່ອໃຫ້ແນ່ໃຈວ່າທ່ານບໍ່ແພ້ຢາ.



**ບໍ່ມີຫຼັກຖານອັນໃດທີ່ສະແດງໃຫ້ເຫັນວ່າວັກຊີນ ເຮັດໃຫ້ເກີດບັນຫາກ່ຽວກັບການເກີດຂອງປະຊາກອນ.**

ແມ່ຍິງຖືພາຄວນຈະບອກໃຫ້ທ່ານໝໍຂອງພວກເຂົາຮູ້ວ່າ ພວກເຂົາຄວນຈະສັກຢາວັກຊີນຫຼືບໍ່.

## ວັກຊີນບາງຊະນິດຕ້ອງການສັກສອງເຂັມ ຂະນະທີ່ວັກຊີນບາງຊະນິດຕ້ອງການສັກພຽງແຕ່ເຂັມດຽວ. ທັງສອງຊະນິດນີ້ແມ່ນປອດໄພ ແລະ ມີປະສິດທິພາບ.

ສຳລັບວັກຊີນທີ່ຕ້ອງສັກ **ສອງ** ເຂັມ:

- ເຂັມທຳອິດເຮັດໃຫ້ຮ່າງກາຍຂອງທ່ານກຽມພ້ອມ.
- ເຂັມທີສອງແມ່ນຈະສັກໃຫ້ໃນສອງສາມອາທິດຫຼັງຈາກທີ່ແນ່ໃຈ ວ່າທ່ານມີການປ້ອງກັນທີ່ສົມບູນ.
- ມັນເປັນສິ່ງສຳຄັນຫຼາຍທີ່ທ່ານຕ້ອງຮັບສອງເຂັມເພື່ອໃຫ້ໄດ້ຮັບ ການປ້ອງກັນທີ່ສົມບູນ.

## ວັກຊີນບໍ່ບັນຈຸ

- ສານກັນບູດ
- ໄຂ່
- ຜະລິດຕະພັນຈາກໝູ
- ເຈລາຕິນ
- ຢາງຈາກພືດ (Latex)
- ໂຄວິດ-19 ທີ່ມີຊີວິດ ໄວຣັສ

## ຢູ່ຢ່າງປອດໄພພາຍຫຼັງທີ່ຮັບການສັກຢາວັກຊີນ.

ປັດຈຸບັນ, ຜູ້ຊ່ຽວຊານບໍ່ຮູ້ວ່າວັກຊີນຈະປ້ອງກັນທ່ານໄດ້ດົນປານໃດ. ເຖິງວ່າໄດ້ຮັບວັກຊີນແລ້ວກໍ່ຕາມ, ໃຫ້ສືບຕໍ່:



ໃສ່ໜ້າກາກ.



ປະຕິບັດໄລຍະຫ່າງທາງສັງຄົມ.



ໝັ່ນລ້າງມືຂອງທ່ານເລື້ອຍໆ.



ໝັ່ນຂ້າເຊື້ອບ່ອນທີ່ມີການສຳພັດເປັນປະຈຳ.

NRC-RIM
National Resource Center for Refugees, Immigrants, and Migrants